Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development
and Cooperation SDC

LUXEMBOURG
AID & DEVELOPMENT



# ຂໍ້ມູນຂະແໜງການທ່ອງທ່ຽວ ສໍາລັບປີ 2019

## ພາບລວມການຈ້າງງານ ແລະ ທັກສະທີ່ຕ້ອງການຂອງຂະແໜງການທ່ອງທ່ຽວ ແລະ ການໂຮງແຮມໃນ ສປປ ລາວ

### ຂໍ້ມູນສຳລັບຜູ້ປະກອບການ, ຜູ້ໃຫ້ບໍລິການດ້ານການຝຶກອົບຮົມ ແລະ ຜູ້ອອກນະໂຍບາຍ

## ພາບລວມຂອງຂະແໜງການທ່ອງທ່ຽວ

ພາຍໃນປີ 2018, ໄດ້ມີນັກທ່ອງທ່ຽວຕ່າງປະເທດເຂົ້າມາຢ້ຽມຢາມປະເທດລາວສູງເຖິງ 4.2 ລ້ານຄົນ, ເພີ່ມຂຶ້ນ 8.2% ຈາກປີ 2017. ປະມານ 3.6 ລ້ານຄົນ (86%) ແມ່ນນັກທ່ອງທ່ຽວພາກພື້ນຈາກປະເທດເພື່ອນບ້ານເຊັ່ນ: ປະເທດໄທ, ຫວຽດນາມ, ຈີນ, ກຳປູເຈຍ ແລະ ມຽນມາ. 564,000 (14%) ແມ່ນນັກທ່ອງທ່ຽວສາກົນທີ່ມາຈາກປະເທດອື່ນໆ. ຄາດຄະເນມີນັກທ່ອງທ່ຽວພາຍໃນ ສູງເຖິງ 2.8 ລ້ານຄົນໃນປີ 2018.

ຄາດຄະເນວ່າຈະມີນັກທ່ອງທ່ຽວເຂົ້າມາຢ້ຽມຢາມປະເທດລາວສູງເຖິງ 4.7 ລ້ານຄົນພາຍໃນປີ 2020, ແລະ ຈະໃຊ້ຈ່າຍສູງເຖິງ 905 ລ້ານໂດລ່າສະຫະລັດ, ແລະ ພາຍໃນປີ 2025 ຈຳນວນນັກທ່ອງທ່ຽວຈະເພີ່ມຂຶ້ນເຖິງ 5.5 ລ້ານຄົນ ແລະ ຈະມີລາຍຮັບ 1.15 ຕື້ໂດລ່າສະຫະລັດ ເຂົ້າສູ່ປະເທດ.

**ຈຳນວນນັກທ່ອງທ່ຽວ ແລະ ລາຍຮັບໃນປີ 2018**




**ການເຕີບໂຕຂອງນັກທ່ອງທ່ຽວຈີນ**

**ຈຳນວນນັກທ່ອງທ່ຽວຈີນເຂົ້າມາຢ້ຽມຢາມລາວແມ່ນກຳລັງເພີ່ມຂຶ້ນ. ໃນປີ 2018, ມີນັກທ່ອງທ່ຽວຈາກຈີນເຂົ້າມາລາວ 805,000 ຄົນ (ເພີ່ມຂຶ້ນ 26% ຈາກປີ 2017) ຫຼື ເທົ່າກັບ 19% ຂອງນັກທ່ອງທ່ຽວທີ່ຢ້ຽມຢາມລາວທັງໝົດ ແລະ ເທົ່າກັບ 19% ຂອງລາຍຈ່າຍນັກທ່ອງທ່ຽວ. ສົມທຽບກັບ 6 ປີກ່ອນມີພຽງ 6.5% ຂອງນັກທ່ອງທ່ຽວທັງໝົດ ແລະ 4% ຂອງລາຍຈ່າຍນັກທ່ອງທ່ຽວ. ຈຳນວນເງິນທີ່ຈ່າຍແຕ່ລະວັນໂດຍນັກທ່ອງທ່ຽວຈີນແມ່ນເພີ່ມຂຶ້ນຢ່າງຫຼວງຫຼາຍໃນປີ 2018 ເມື່ອສົມທຽບກັບຊຸມປີຜ່ານມາ. ພວກເຂົາໃຊ້ຈ່າຍປະມານ 80 ໂດລ່າສະຫະລັດທຽບເທົ່າກັບ 90 ໂດລ່າທີ່ໃຊ້ຈ່າຍ ໂດຍນັກທ່ອງທ່ຽວຕ່າງປະເທດ.**

ຈຳນວນນັກທ່ອງທ່ຽວຕ່າງປະເທດກວມອັດຕາ 38% ຂອງຈຳນວນມື້ນັກທ່ອງທ່ຽວ. ໂດຍສະເລ່ຍແລ້ວ, ນັກທ່ອງທ່ຽວຕ່າງປະເທດແມ່ນໃຊ້ເວລາຢູ່ດົນກ່ວາ - ຢູ່ 8 ວັນເມື່ອສົມທຽບກັບ 2 ວັນ - ແລະ ໃຊ້ຈ່າຍເງິນຫຼາຍກ່ວາໃນແຕ່ລະວັນໃນ ສປປ ລາວ ຖ້າທຽບກັບ ນັກທ່ອງທ່ຽວພາກພື້ນ.

ໂດຍລວມທັງໝົດ, ນັກທ່ອງທ່ຽວໃຊ້ຈ່າຍເປັນເງິນ 811 ລ້ານໂດລ່າສະຫະລັດ. ຈຳນວນເງິນນີ້ແມ່ນຊ່ວຍສະໜອງລາຍຮັບໃຫ້ແກ່ສິບພັນກ່ວາຄົນ ຈາກການຈ້າງງານໃນຂະແໜງທ່ອງທ່ຽວ ແລະ ບໍລິການໂດຍກົງ. ໃນປີ 2018, ຍອດເງິນໃຊ້ຈ່າຍທັງໝົດຈາກນັກທ່ອງທ່ຽວພາກພື້ນແມ່ນ 402 ລ້ານໂດລ່າ, ເພີ່ມຂຶ້ນຈຳນວນ 92 ລ້ານໂດລ່າຈາກປີ 2017, ສ່ວນໃຫຍ່ແມ່ນມາຈາກກຳລັງຊື້ທີ່ສູງຂອງນັກທ່ອງທ່ຽວຈາກປະເທດຈີນ.

ຂໍ້ມູນຖະແຫຼງການນີ້ແມ່ນໃຫ້ຂໍ້ມູນຂ່າວສານກ່ຽວກັບການພັດທະນາຂະແໜງການທ່ອງທ່ຽວ ແລະ ການບໍລິການ. ຍັງປະກອບມີຂໍ້ມູນຂອງບັນດາບຸກຄະລາກອນຊຳນານງານ ແລະ ວິທີການທີ່ທ່ານສາມາດພັດທະນາທຸລະກິດຂອງທ່ານ ຜ່ານການເສີມສ້າງທັກສະຄວາມສາມາດຂອງບຸກຄະລາກອນທ່ອງທ່ຽວຂອງທ່ານ. ໃນຊ່ວງເວລາກະກຽມຂໍ້ມູນຖະແຫຼງການນີ້, ພວກເຮົາໄດ້ເອົາໃຈກະກຽມຢ່າງລະອຽດເພື່ອຮັບປະກັນວ່າຜູ້ອ່ານຈະໄດ້ຮັບຂໍ້ມູນຂ່າວສານດ້ານຕະຫຼາດແຮງງານຢ່າງທັນການ ແລະ ຊັດເຈນ. ສະຖານະການອາດມີການປ່ຽນແປງຕະຫຼອດເວລາ, ຂໍ້ມູນບາງຢ່າງອາດມີການປ່ຽນແປງພາຍຫຼັງຕີພິມ. ພວກເຮົາແນະນຳວ່າຜູ້ອ່ານຄວນຊອກຫາແຫຼ່ງຂໍ້ມູນເພີ່ມເຕີມກ່ຽວກັບເສດຖະກິດທ້ອງຖິ່ນ ແລະ ຕະຫຼາດແຮງງານ.

# ພັດທະນາບຸກຄະລາກອນດ້ານການທ່ອງທ່ຽວ ຂອງ ສປປ ລາວ

ຖ້າຄຳນຶງໃຫ້ດີ, ການເຕີບໂຕໃນອະນາຄົດ ແລະ ການພັດທະນາຕະຫຼາດການທ່ອງທ່ຽວໃໝ່ຈະນຳໄປສູ່ຄວາມຕ້ອງການອັນມະຫາສານຕໍ່ກັບບຸກຄະລາກອນທີ່ໄດ້ຜ່ານການຝຶກອົບຮົມເປັນຢ່າງດີ ພ້ອມທັກສະ, ຄວາມສາມາດທີ່ຫຼາກຫຼາຍ. ແຕ່ຕ້ອງໄດ້ຮັບຄວາມສົນໃຈຈາກຫຼາຍລະດັບພາກສ່ວນ ແລະ ໃນຫຼາຍຂົງເຂດທັກສະອາຊີບ, ລວມທັງການຍົກລະດັບທັກສະພະນັກງານທີ່ມີຢູ່ປະຈຸບັນ ແລະ ພັດທະນາທັກສະຕາມກົນໄກຄວາມຕ້ອງການຂອງອຸດສາຫະກຳ.

## ຈຸດເດັ່ນຂອງແຮງງານ ໃນດ້ານທ່ອງທ່ຽວ

ລວມທັງໝົດ, ທຸລະກິດຂະໜາດກາງ ແລະ ໃຫຍ່ ມີອັດຕາຈ້າງງານທັງໝົດ 42,000 ຄົນ. ອີກ 12,000 ຄົນ ແມ່ນການວ່າຈ້າງໂດຍທຸລະກິດຂະໜາດນ້ອຍ ໂດຍມີພະນັກງານທັງໝົດບໍ່ເກີນ 6 ຄົນ. ປະມານ 17,000 ຄົນແມ່ນປະກອບອາຊີບສະເພາະດ້ານກ່ຽວກັບຂະແໜງການທ່ອງທ່ຽວ ແລະ ການໂຮງແຮມ (ການປະກອບອາຊີບທີ່ມີລັກສະນະສະເພາະດ້ານການທ່ອງທ່ຽວ) ເຊັ່ນ: ພະນັກງານເສີບ ແລະ ພະນັກງານນຳທ່ຽວ.




| | |
|---|---|
| ນະຄອນຫຼວງວຽງຈັນ | 9,652 |
| ນະຄອນຫຼວງພະບາງ | 8,389 |
| ໄຊຍະບູລີ | 4,269 |
| ຈຳປາສັກ | 3,094 |
| ຄຳມ່ວນ | 2,840 |
| ແຂວງວຽງຈັນ | 2,661 |
| ສະຫວັນນະເຂດ | 2,387 |
| ບໍ່ແກ້ວ | 1,367 |
| ບໍລິຄຳໄຊ | 1,065 |
| ອຸດົມໄຊ | 958 |
| ສາລະວັນ | 728 |
| ຫຼວງນ້ຳທາ | 547 |
| ຊຽງຂວາງ | 500 |
| ຫົວພັນ | 476 |
| ໄຊສົມບູນ | 462 |
| ອັດຕະປື | 447 |
| ເຊກອງ | 299 |
| ຜົ້ງສາລີ | 265 |

ນັບຕັ້ງແຕ່ເດືອນພຶດສະພາ 2019 ຄ່າແຮງຂັ້ນຕ່ຳໄດ້ຖືກກຳນົດເປັນ 1,100,000 ກີບ/ເດືອນ

**ໂດຍທົ່ວໄປແລ້ວ ໃນຫົວໜ່ວຍທຸລະກິດຂອງການທ່ອງທ່ຽວ ແລະ ການໂຮງແຮມ ແມ່ນມີພະນັກງານສະເຫຼ່ຍປະມານ 15 ຄົນ. ສ່ວນໃຫຍ່ແລ້ວ, ແມ່ນເປັນທຸລະກິດຂະໜາດໜ້ອຍ (6-20 ຄົນ) ຫຼື ຂະໜາດຈຸລະພາກ (ໜ່ອຍກວ່າ 6 ຄົນ). ໃນຂະນະທີ່ທຸລະກິດຂະໜາດກາງ (21-100 ຄົນ), ຂະໜາດໃຫຍ່ (101-200 ຄົນ) ແລະ ຂະໜາດມະຫາພາກ (ຫຼາຍກວ່າ 200 ຄົນ) ເຊິ່ງລວມທູກຂະໜາດທີ່ກ່າວມານັ້ນ ມີພຽງແຕ່ 19%, ໃນນັ້ນແມ່ນກວມເອົາ 60% ຂອງການຈ້າງງານທັງໝົດ.**

## ສະຖິຕິຕົວເລກວຽກ ໃນຂະແໜງ ການທ່ອງທ່ຽວ ແລະ ການໂຮງແຮມ ປີ 2018



| | |
|---|---|
| ພະນັກງານອານາໄມ / ແມ່ບ້ານ | 4,437 |
| ພະນັກງານເສີບ | 4,265 |
| ຜູ້ບໍລິຫານ ແລະ ຫົວໜ້າຜູ້ບໍລິຫານ | 2,664 |
| ພະນັກງານຕ້ອນຮັບໂຮງແຮມ/ລີຊອດ/ເຮືອນພັກ | 2,189 |
| ພໍ່ຄົວ | 2,051 |
| ພະນັກງານຮັກສາຄວາມປອດໄພ | 1,853 |
| ຜູ້ຊ່ວຍຂາຍເຄື່ອງໃນຮ້ານຄ້າ | 1,716 |
| ນັກບັນຊີ/ ພະນັກງານບັນຊີ/ຈົດບັນທຶກ | 1,145 |
| ພະນັກງານນຳທ່ຽວ | 956 |
| ຜູ້ຈັດການໂຮງແຮມ/ລີຊອດ/ເຮືອນພັກ | 870 |
| ພະນັກງານຜູ້ຊ່ວຍຫ້ອງຄົວ | 808 |
| ທີ່ປຶກສາ ແລະ ພະນັກງານແນະນຳການທ່ອງທ່ຽວ | 642 |
| ຜູ້ຈັດການຮ້ານອາຫານ/ພັບ/ບາ/ສະຖານທີ່ບັນເທີງ | 287 |
| ພໍ່ຄົວ | 175 |
| ພະນັກງານເສີບເຄື່ອງດື່ມ | 171 |
| ພະນັກງານຍົກກະເປົາ | 108 |
| ຫົວໜ້າຜູ້ຈັດການອານາໄມ ແລະ ຮັກສາຄວາມສະອາດ | 107 |

## ຜົນກະທົບຂອງການຂາດແຄນແຮງງານ

ນາຍຈ້າງອາດພົບກັບບັນຫາໃນວຽກບາງປະເພດແມ່ນຊອກຫາພະນັກງານຍາກກ່ວາຕຳແໜ່ງອື່ນ ຫຼື ເຮົາຮູ້ກັນດີໃນນາມ ການຂາດແຄນແຮງງານໃນສະເພາະຂົງເຂດ. ຖ້າຫົວໜ່ວຍທຸລະກິດບໍ່ສາມາດຄັດຫາພະນັກງານທີ່ມີທັກສະຄວາມສາມາດ ເພື່ອດຳເນີນງານໃຫ້ໄດ້ປະສິດທິພາບ, ອາດມີຜົນກະທົບຕໍ່ປະສິດທິຜົນ ແລະ ການແຂ່ງຂັນກັນພາຍໃນຂະແໜງການ. ບັນຫາການຂາດແຄນແຮງງານບໍ່ໄດ້ສະທ້ອນທີ່ປະລິມານແຮງງານທີ່ມີສຳລັບວຽກ ແຕ່ສະທ້ອນໃຫ້ເຫັນທີ່ຄວາມສາມາດ ວ່າຕອບສະໜອງໄດ້ຕາມມາດຕະຖານທີ່ນາຍຈ້າງຕ້ອງການຫຼືບໍ່. ເຖິງຢ່າງໃດກໍ່ຕາມ, ການລົງທຶນໃນການພັດທະນາທັກສະຂອງຂະແໜງແມ່ນຍັງຕ່ຳຫຼາຍມີພຽງໜຶ່ງສ່ວນສາມ (36%) ຂອງຫົວໜ່ວຍທຸລະກິດທີ່ໄດ້ຈັດຫາການຝຶກອົບຮົມໃຫ້ແກ່ພະນັກງານໃນໄລຍະ 12 ເດືອນຜ່ານມາ. ສະເລ່ຍແລ້ວ, ນາຍຈ້າງລົງທຶນພຽງ 2 ຊົ່ວໂມງຕໍ່ກັບ/ພະນັກງານ 1 ທ່ານ/ຕໍ່ປີ ໃນການຝຶກອົບຮົມ ແລະ ພັດທະນາບຸກຄະລາກອນ.

ນາຍຈ້າງສາມາດວາງແຜນຈ້າງພະນັກງານໄລຍະຍາວ ໂດຍ ການສະໜັບສະໜູນພະນັກງານທີ່ມີໃຫ້ຍົກລະດັບທັກສະ ແລະ ຄຸນນະວຸດ.

## ຕຳແໜ່ງຫວ່າງໃນຂະແໜງທ່ອງທ່ຽວ - ຕຳແໜ່ງທີ່ຈະເຕັມເຕີມ

ຍັງມີຄວາມແຕກຕ່າງຫຼາຍ ດ້ານການສະໜອງ ແລະ ຄວາມຕ້ອງການຂອງທັກສະຄວາມສາມາດຕາມແຕ່ລະພື້ນທີ່. ນັກສຶກສາຈົບໃໝ່ໃນບາງພື້ນທີ່ບໍ່ສາມາດຊອກວຽກເຮັດທີ່ທ້ອງຖິ່ນທີ່ເໝາະກັບຄຸນນະວຸດ ແລະ ທັກສະຂອງເຂົາເຈົ້າ. ແຕ່ໃນບາງເຂດນາຍຈ້າງພັດບໍ່ສາມາດຊອກຫານັກສຶກສາຈົບໃໝ່ຢ່າງພຽງພໍກັບຄວາມຕ້ອງການ.

ໂດຍຮັບຮູ້ວ່າການສ້າງຄວາມສົມດູນລະຫວ່າງການສະໜອງ ແລະ ຄວາມຕ້ອງການຂອງທັກສະຄວາມສາມາດ ແມ່ນມີຄວາມທ້າທາຍ ໂດຍສະເພາະແມ່ນໄລຍະສັ້ນ ຫາໄລຍະກາງ, ນາຍຈ້າງສາມາດແກ້ໄຂບັນຫາຂາດແຄນແຮງງານໂດຍການຊອກຫາພະນັກງານທີ່ມາຈາກພື້ນທີ່ອື່ນ, ສ່ວນນັກສຶກສາຈົບໃໝ່ທີ່ສາມາດເຄື່ອນຍ້າຍໄປມາໄດ້ ສາມາດຮັບເອົາໂອກາດຈ້າງງານຈາກພື້ນທີ່ອື່ນທີ່ບໍ່ແມ່ນແຂວງຂອງຕົນ.

ຄວາມຕ້ອງການແຜນງານດ້ານການທ່ອງທ່ຽວ ແລະ ການໂຮງແຮມໄດ້ເພີ່ມຂຶ້ນ ໂດຍມີຈຳນວນນັກຮຽນລົງທະບຽນເພີ່ມຂຶ້ນຈາກ 2,000 ຄົນໃນປີ 2017 ຮອດ 3,500 ຄົນໃນປີ 2018. ແຕ່ຍັງມີພຽງ 3% ຂອງພະນັກງານທັງໝົດໃນຂະແໜງທີ່ມີຄຸນນະວຸດສະເພາະດ້ານການທ່ອງທ່ຽວ, ສ່ວນທີ່ເຫຼືອ 27% ແມ່ນມາຈາກສາຍທີ່ບໍ່ກ່ຽວຂ້ອງກັບຂະແໜງທ່ອງທ່ຽວ.




### ບັນດາຜູ້ໃຫ້ບໍລິການດ້ານການສຶກສາ ແລະ ຝຶກອົບຮົມ ໃນຂະແໜງທ່ອງທ່ຽວ ແລະ ການໂຮງແຮມ ທັງພາກລັດ ແລະ ເອກະຊົນ.



ໂຮງຮຽນເຕັກນິກວິຊາຊີບແບບປະສົມແຂວງອັດຕະປື
ໂຮງຮຽນເຕັກນິກວິຊາຊີບແຂວງບໍ່ແກ້ວ
ໂຮງຮຽນເຕັກນິກວິຊາຊີບແຂວງບໍລິຄຳໄຊ
ສູນພັດທະນາສີມືແຮງງານແຂວງຈຳປາສັກ
ວິທະຍາໄລເຕັກນິກວິຊາຊີບແຂວງຈຳປາສັກ
ມະຫາວິທະຍາໄລຈຳປາສັກ
ໂຮງຮຽນເຕັກນິກວິຊາຊີບແບບປະສົມແຂວງຫົວພັນ
ວິທະຍາໄລເຕັກນິກວິຊາຊີບແຂວງຄຳມ່ວນ
ໂຮງຮຽນເຕັກນິກວິຊາຊີບແບບປະສົມແຂວງຫຼວງນ້ຳທາ
ສູນຝຶກອົບຮົມລານິດແຂວງຫຼວງພະບາງ
ມະຫາວິທະຍາໄລສຸພານຸວົງ, ຫຼວງພະບາງ
ວິທະຍາໄລເຕັກນິກວິຊາຊີບແຂວງຫຼວງພະບາງ
ໂຮງຮຽນເຕັກນິກວິຊາຊີບແບບປະສົມເມືອງນ້ຳບາກ ແຂວງຫຼວງພະບາງ
ໂຮງຮຽນເຕັກນິກວິຊາຊີບແບບປະສົມແຂວງອຸດົມໄຊ
ສູນພັດທະນາສີມືແຮງງານແຂວງອຸດົມໄຊ
ໂຮງຮຽນເຕັກນິກວິຊາຊີບແບບປະສົມແຂວງຜົ້ງສາລີ
ໂຮງຮຽນເຕັກນິກວິຊາຊີບແບບປະສົມແຂວງສາລະວັນ
ໂຮງຮຽນເຕັກນິກວິຊາຊີບແບບປະສົມແຂວງສາລະວັນ
ມະຫາວິທະຍາໄລສະຫວັນນະເຂດ
ໂຮງຮຽນເຕັກນິກວິຊາຊີບແບບປະສົມແຂວງເຊກອງ
ໂຮງຮຽນເຕັກນິກວິຊາຊີບແບບປະສົມແຂວງໄຊຍະບູລີ
ໂຮງຮຽນເຕັກນິກວິຊາຊີບແບບປະສົມແຂວງຊຽງຂວາງ
ວິທະຍາໄລເຕັກນິກວິຊາຊີບແຂວງວຽງຈັນ

ທີ່ນະຄອນຫຼວງວຽງຈັນ
ວິທະຍາໄລລາວນານາຊາດ (ເອກະຊົນ)
ວິທະຍາໄລລາວວຽງ (ເອກະຊົນ)
ສູນຝຶກອົບຮົມສະຫະພັນແມ່ຍິງລາວ
ສະຖາບັນພັດທະນາສີມືແຮງງານລາວ-ເກົາຫຼີ
ມະຫາວິທະຍາໄລແຫ່ງຊາດລາວ
ວິທະຍາໄລເຕັກນິກປາກປ່າສັກ
ວິທະຍາໄລສຸກສະຫວັດ (ເອກະຊົນ)
ວິທະຍາໄລພັດທະນາອາຊີບ ນະຄອນຫຼວງວຽງຈັນ
ສູນພັດທະນາສີມືແຮງງານນະຄອນຫຼວງວຽງຈັນ

TVET= ເຕັກນິກວິຊາຊີບ
IVET= ເຕັກນິກວິຊາຊີບແບບປະສົມ

## ການເຮັດວຽກຮ່ວມກັບຜູ້ສະໜອງການສຶກສາ ແລະ ຝຶກອົບຮົມ

ຍັງມີໂອກາດທີ່ຫົວໜ່ວຍທຸລະກິດ ໃນການເຮັດວຽກຢ່າງໃກ້ຊິດກັບບັນດາສະຖາບັນການສຶກສາ ແລະ ການຝຶກອົບຮົມ ເພື່ອພັດທະນາຫຼັກສູດການສິດສອນ ໃຫ້ເປັນລັກສະນະນຳໃຊ້ໄດ້ແທ້ໃນຊີວິດຈິງ ເພື່ອເປັນການ "ສ້າງຄວາມພ້ອມໃຫ້ແກ່ການເຮັດວຽກ" ຂອງນັກສຶກສາຈົບໃໝ່. ວິທີການດັ່ງກ່າວ ແມ່ນສາມາດແກ້ໄຂຄວາມແຕກຕ່າງຂອງບັນຫາດ້ານການປະກອບອາຊີບ ແລະ ພື້ນທີ່. ອົງປະກອບຂອງວິທີການນີ້ແມ່ນໄດ້ແຊກຊ້ອນເຂົ້າໄປໃນຫຼາຍແຜນງານລິເລີ່ມການມີສ່ວນຮ່ວມລະຫວ່າງ ຂະແໜງການສຶກສາ-ຫົວໜ່ວຍທຸລະກິດ* ເຊິ່ງຈະເຊື່ອມໂຍງພາກທຸລະກິດທ່ອງທ່ຽວກັບຂະແໜງການສຶກສາ ແລະ ຜູ້ສະໜອງການຝຶກອົບຮົມ ເພື່ອພັດທະນາບຸກຄະລາກອນທີ່ສົມບູນແບບ ໃນການຕອບສະໜອງຕາມຄວາມຕ້ອງການຂອງອຸດສາຫະກຳທ້ອງຖິ່ນ.

ການເພີ່ມຂຶ້ນຂອງນັກທ່ອງທ່ຽວຈາກປະເທດຈີນ: ປີ 2017 ຫາ 2018




## ສ້າງຄວາມພ້ອມຕ້ອນຮັບນັກທ່ອງທ່ຽວຈີນ - ເຮັດໃຫ້ຕະຫຼາດຂອງທ່ານມີການຈະເລີນເຕີບໂຕ

ອີງຕາມການຄາດຄະເນ ເຫັນວ່າມີການເພີ່ມຂຶ້ນຂອງຈຳນວນນັກທ່ອງທ່ຽວຈີນ ສະນັ້ນ, ຈຶ່ງມີຄວາມສຳຄັນຫຼາຍໃນການກຽມຄວາມພ້ອມເພື່ອຕ້ອນຮັບນັກທ່ອງທ່ຽວຈີນ. ທ່ານສາມາດເຮັດໃຫ້ທຸລະກິດຂອງທ່ານຈະເລີນເຕີບໂຕດ້ວຍການລົງທຶນໃນຜະລິດຕະພັນ ແລະ ການບໍລິການ ທີ່ມຸ່ງເນັ້ນໃສ່ນັກທ່ອງທ່ຽວຈີນ.

ຫຼັກສູດການຝຶກສອນ ໄດ້ຖືກພັດທະນາຂຶ້ນ ສຳລັບສະຖາບັນເຕັກນິກວິຊາຊີບ ແລະ ຫົວໜ່ວຍທຸລະກິດທ່ອງທ່ຽວ ເພື່ອເສີມສ້າງຈິດສຳນຶກ ແລະ ຄວາມເຂົ້າໃຈ ຕໍ່ກັບບັນດາແນວໂນ້ມການເຕີບໂຕຂອງຕະຫຼາດທ່ອງທ່ຽວ. ຫຼັກສູດຝຶກອົບຮົມ ການກຽມຄວາມພ້ອມຕ້ອນຮັບນັກທ່ອງທ່ຽວຈາກປະເທດຈີນ* ທີ່ຈັດຕັ້ງປະຕິບັດໂດຍ ສະຖາບັນສື່ມ່ວນຊອນ, ວັດທະນະທຳ ແລະ ທ່ອງທ່ຽວ (IMCT) ທີ່ມີຈຸດປະສົງມຸ່ງເນັ້ນສະໜັບສະໜູນ ບັນດາຜູ້ປະກອບການທຸລະກິດຂະໜາດນ້ອຍ-ກາງ ແລະ ຜູ້ຈັດການ ເພື່ອໃຫ້ເຂົາເຈົ້າບໍ່ພາດໂອກາດ ແລະ ດ້ຮັບຜົນປະໂຫຍດຈາກແນວໂນ້ມການເພີ່ມຂຶ້ນຂອງນັກທ່ອງທ່ຽວຈີນນີ້. ທ່ານສາມາດສົ່ງເສີມໃຫ້ພະນັກງານຂອງທ່ານ ພັດທະນາທັກສະ,ຄວາມສາມາດ ແລະ ຄວາມຮູ້ດ້ານວັດທະນະທຳຂອງຈີນ ເພື່ອຮັບປະກັນວ່າລູກຄ້າຂອງທ່ານຈະໄດ້ຮັບປະສົບການທີ່ເປັນເລີດ.

# ບັນດາຄຳຖາມທີ່ຖືກຖາມປະຈຳ

**ຂ້ອຍຈະສາມາດຊອກຫາພະນັກງານໃໝ່ໄດ້ແນວໃດ?**
ທ່ານສາມາດສ້າງຄວາມສົນໃຈໃຫ້ແກ່ຜູ້ສະໝັກຈຳນວນຫຼາຍ ໂດຍການເຂົ້າຮ່ວມຕະຫຼາດນັດແຮງງານ, ລົງໂຄສະນາອອນລາຍ, ຕົວຢ່າງ: ໂຄສະນາເທິງເວັບໄຊ ແລະ ສື່ສັງຄົມອອນລາຍ, ຜ່ານໜ່ວຍງານຈັດຫາງານ ຫຼື ເວັບໄຊຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ນອກນັ້ນ ທ່ານຍັງສາມາດຕິດຕໍ່ໂດຍກົງກັບໂຮງຮຽນ, ວິທະຍາໄລ ແລະ ຜູ້ສະໜອງການຝຶກອົບຮົບ ດ້ານການທ່ອງທ່ຽວ ແລະ ການໂຮງແຮມ.

**ມີຜູ້ສະໜອງການຝຶກອົບຮົບ ດ້ານການທ່ອງທ່ຽວ ແລະ ການໂຮງແຮມ ໃນຂົງເຂດຂອງຂ້ອຍບໍ່?**
ມີຫຼັກສູດຝຶກອົບຮົມໃນທົ່ວທຸກຂົງເຂດ. ແຕ່ທາງເລືອກຫຼາກຫຼາຍທີ່ສຸດແມ່ນຢູ່ທີ່ໂຮງຮຽນ/ວິທະຍາໄລເຕັກນິກວິຊາຊີບ ຂອງລັດ. ນອກນັ້ນ ຍັງປະກອບມີຫຼັກສູດຝຶກອົບຮົມວິຊາຊີບຂອງວິທະຍາໄລເອກະຊົນ, ສູນພັດທະນາສີມືແຮງງານ, ສະຫະພັນແມ່ຍິງ, ແລະ ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ.

**ຂ້ອຍຈະສາມາດສ້າງທຸລະກິດຂອງຂ້ອຍໃຫ້ມີອະນາຄົດທີ່ໝັ້ນຄົງໄດ້ແນວໃດ?**
ຕ້ອງໄດ້ຄຳນຶງເຖິງແນວໂນ້ມຂອງຂະແໜງການທ່ອງທ່ຽວຕະຫຼອດເວລາ. ປະເມີນຄືນວ່າທຸລະກິດຂອງທ່ານໃນປະຈຸບັນໄດ້ຕອບສະໜອງຕໍ່ກັບບັນດາແນວໂນ້ມນີ້ຄືແນວໃດ. ຕົວຢ່າງ, ການເພີ່ມຂຶ້ນຂອງນັກທ່ອງທ່ຽວຈີນ, ຄວາມຕ້ອງການເພີ່ມຂຶ້ນຂອງກິດຈະກຳທ່ອງທ່ຽວນອກສະຖານທີ່, ຄວາມຈຳເປັນປ່ຽນແປງດ້ານພາສາ ແລະ ອື່ນໆ. ວາງແຜນການໃຫ້ບໍລິການຂອງທ່ານໃຫ້ຕອບສະໜອງຕາມຄວາມຕ້ອງການໃໝ່ໆ. ວ່າຈ້າງພະນັກງານໃໝ່ທີ່ມີທັກສະໃນການໃຫ້ບໍລິການກຸ່ມຕະຫຼາດໃໝ່, ແລະ ສົ່ງເສີມຍົກລະດັບທັກສະຄວາມສາມາດໃຫ້ແກ່ພະນັກງານປະຈຸບັນ.

**ຂ້ອຍຈະເຮັດແນວໃດເພື່ອຮັກສາພະນັກງານຂອງຂ້ອຍໃຫ້ຢູ່ຕໍ່?**
ການສ້າງສະພາບແວດລ້ອມໃນບ່ອນເຮັດວຽກໃຫ້ມີຄວາມປອດໄພ ແລະ ໝັ້ນຄົງ ໃຫ້ແກ່ພະນັກງານໝົດທຸກຄົນແມ່ນຈຸດເລີ່ມຕົ້ນທີ່ດີ. ສ້າງໂອກາດສົ່ງເສີມພະນັກງານໃຫ້ໄດ້ຮັບການຝຶກອົບຮົມ ແລະ ການພັດທະນາ ແລະ ຈັດຫາສະຫວັດດີການ ຜົນປະໂຫຍດອັນເປັນທີ່ດຶງດູດໃຈໃຫ້ແກ່ພະນັກງານໃນອົງກອນ.

**ທ່ານຄວນກະຕຸ້ນສົ່ງເສີມພະນັກງານຂອງທ່ານ ໃນການພັດທະນາທັກສະດ້ານພາສາຂອງເຂົາເຈົ້າ.**
ຖ້າທຸລະກິດຂອງທ່ານ ໄດ້ມີການພົວພັນກັບນັກທ່ອງທ່ຽວຕ່າງປະເທດໂດຍກົງ, ທັກສະດ້ານພາສາຂອງພະນັກງານແມ່ນມີຄວາມສຳຄັນຢ່າງຍິ່ງ ໃນການມອບປະສົບການທີ່ດີໃຫ້ແກ່ນັກນັກທ່ອງທ່ຽວ. ຫຼາຍໆວິທະຍາໄລ ທັ້ງລັດ ແລະ ເອກະຊົນ ມີຫຼັກສູດຝຶກອົບຮົມພາສາຕ່າງປະເທດ.
ອີກໜຶ່ງວິທີການປະຢັດທີ່ທ່ານສາມາດພັດທະນາທັກສະພາສາອັງກິດຂອງພະນັກງານ, ຊັກຊວນໃຫ້ເຂົາເຈົ້າດາວໂຫລດແອບພິເຄຊັນ ຮຽນພາສາອັງກິດສຳລັບການທ່ອງທ່ຽວ ແລະ ການໂຮງແຮມ ຟຣີ ທີ່ມີຊື່ວ່າ **"ສະບາຍດີພາສາອັງກິດ"** ໄດ້ຕາມລາຍລະອຽດດັ່ງນີ້:
ລະບົບ iOS: **ເຂົ້າໄປທີ່ App Store ແລ້ວພິມ: Sabaidee English**
ລະບົບ Android: **ເຂົ້າໄປທີ່ Play Store ແລ້ວພິມ: Sabaidee English**

**ສົ່ງເສີມໃຫ້ພະນັກງານໄດ້ຮຽນ - ສ້າງຄຸນນະພາບໃນການໃຫ້ບໍລິການຂອງອົງກອນທ່ານ**
ທ່ານມີພະນັກງານຄົນໃດບໍ່ ທີ່ຕ້ອງການຢາກສຶກສາຍົກລະດັບຄຽງຄູ່ກັບການເຮັດວຽກໄປພ້ອມກັນ? ປະຈຸບັນມີຫຼາກຫຼາຍຫຼັກສູດທີ່ສາມາດຊ່ວຍໃຫ້ເຂົາເຈົ້າລິເລີ່ມໄດ້. ສົ່ງເສີມໂອກາດ ແລະ ທາງຜ່ານທີ່ຫຼາກຫຼາຍ.
ສຳລັບຂໍ້ມູນເພີ່ມເຕີ່ມກ່ຽວກັບ ຫຼັກສູດການຮຽນ-ການສອນ ຂອງໂຮງຮຽນ/ວິທະຍາໄລ ເຕັກນິກວິຊາຊີບ ໃນຂະແໜງການທ່ອງທ່ຽວ ແລະ ການໂຮງແຮມ, ກະລຸນາເຂົ້າເບິ່ງທີ່ເວັບໄຊ www.tvet-laos.org ຫຼື ດາວໂຫລດແອບພິເຄຊັນ **TVET App**
ລະບົບ iOS: **ເຂົ້າໄປທີ່ App Store ແລ້ວພິມ: TVET**
ລະບົບ **Android: ເຂົ້າໄປທີ່ Play Store ແລ້ວພິມ: TVET LAO**

**ລົງໂຄສະນາບັນດາຕຳແໜ່ງຫວ່າງ - ເສີມສ້າງບຸກຄະລາກອນຂອງທ່ານ**
ປະຈຸບັນນີ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມໄດ້ເປີດນຳໃຊ້ເວັບໄຊທີ່ສາມາດແລກປ່ຽນຂໍ້ມູນຂ່າວສານຕະຫຼາດແຮງງານລະຫວ່າງນາຍຈ້າງ ແລະ ລູກຈ້າງທີ່ກຳລັງຊອກວຽກ. ທ່ານສາມາດນຳໃຊ້ເວັບໄຊ້ດັ່ງກ່າວເພື່ອລົງໂຄສະນາບັນດາຕຳແໜ່ງວ່າງໃນການເຂົ້າເຖິງບັນດາຜູ້ສະໝັກທີ່ຫຼາກຫຼາຍ ແລະ ນອກນັ້ນ ຍັງສາມາດຄົ້ນຫາຂໍ້ມູນອື່ນໆທີ່ກ່ຽວຂ້ອງເພື່ອນຳມາໃຊ້ພັດທະນາທຸລະກິດຂອງທ່ານ.
**ເຂົ້າໄປທີ່ເວັບໄຊ http://www.lmi.molsw.gov.la/**

ຂໍ້ມຸນຖະແຫຼງການດ້ານຕະຫຼາດແຮງງານສະບັບນີ້ ແມ່ນອີງໃສ່ຜົນວິໃຈຂອງການສຳຫຼວດການຈ້າງງານ ແລະ ສີມືແຮງງານໃນຂະແໜງທຸລະກິດທ່ອງທ່ຽວ ແລະ ການບໍລິການໃນ ສປປ ລາວ ປະຈຳປີ 2018 ເຊິ່ງໄດ້ຮັບການສະໜັບສະໜູນໂດຍໂຄງການທັກສະສຳລັບວຽກງານການທ່ອງທ່ຽວ (ລາວ/029).

ໂຄງການທັກສະສຳລັບວຽກງານທ່ອງທ່ຽວໃຫ້ການສະໜັບສະໜູນດ້ານເຕັກນິກວິຊາຊີບ ແລະ ຝຶກອົບຮົມ ແລະ ການພັດທະນາສີມືແຮງງານໃນຂະແໜງການທ່ອງທ່ຽວ ແລະ ການບໍລິການໃນ ສປປ ລາວ. ແລະ ໂຄງການໄດ້ສຸມຄວາມພະຍາຍາມຊ່ວຍເຫຼືອບັນດາບຸກຄົນທີ່ດ້ອຍໂອກາດ ເພື່ອໃຫ້ເຂົາເຈົ້າໄດ້ຮັບທັກສະຄວາມສາມາດທີ່ຈຳເປັນຕໍ່ການເຮັດວຽກໃນໂຮງແຮມ, ຮ້ານອາຫານ ແລະ ໃນລະບົບເສດຖະກິດທ່ອງທ່ຽວ. ຫຼາຍແຜນງານລິເລີ່ມທີ່ໄດ້ອ້າງອີງໃນຂໍ້ມຸນຖະແຫຼງການນີ້ແມ່ນໄດ້ຮັບການສະໜັບສະໜູນຈາກໂຄງການ.

ໂຄງການທັກສະສຳລັບວຽກງານທ່ອງທ່ຽວໄດ້ຮັບເງິນແຫຼ່ງທຶນຮ່ວມ ໂດຍລັດຖະບານແຫ່ງ ສປປ ລາວ, ລັດຖະບານແຫ່ງລາດຊະອານາຈັກລຸກຊຳບວກ, ແລະ ລັດຖະບານສະວິດເຊີແລນ, ຜ່ານການຈັດຕັ້ງປະຕິບັດໂດຍກະຊວງສຶກສາທິການ ແລະ ກິລາແຫ່ງ ສປປ ລາວ ແລະ ອົງການພັດທະນາ ແລະ ຮ່ວມມືແຫ່ງປະເທດລຸກຊຳບວກ ປະຈຳລາວ (LuxDev).

**ຕຸລາ 2019**

ໂຄງການທັກສະສຳລັບວຽກງານທ່ອງທ່ຽວ (LAO/029)
ຖະໜົນຂຸນບູລົມ, ບ້ານວັນຈັນ, ເມືອງຈັນທະບູລີ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ +856 21 253 156 ແຟັກ +856 21 253 157
ອີເມວ: lao029@luxdev.lu

ຈັດພິມໂດຍ: ກະຊວງສຶກສາທິການ ແລະ ກິລາ
ຖະໜົນລ້ານຊ້າງ, ບ້ານຊຽງຍືນ, ເມືອງຈັນທະບູລີ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ +856 21 216 004

LUX DEV
Luxembourg Development Cooperation Agency